# ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ແລະ ການຈັດການຮຽນຮູ້ທິດສະດີ ຄຽງຄູ່ກັບຮູບພາບ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ໂດຍໃຊ້ວິທີສອນລະດົມສະໝອງ ນັກສຶກສາຄູເຄມີ ປີ 2 ລະບົບ 12 + 4 ພາກຮຽນທີ 3 ສົກຮຽນ 2019-2020 ທີ່ ວິທະຍາໄລຄູ ຫຼວງພະບາງ

**ດວງມາລາ ຄຳຕາ***

*່ວຍງານ ຊີວະສາດ, ຂະແໜງວິທະຍາສາດທຳມະຊາດ ວິທະຍາໄລຄູຫຼວງພະບາງ, ສປປ ລາວ*

*ຕິດຕໍ່ພົວພັນ: ດວງມາລາ ຄຳຕາ ໜ່ວຍງານຊີວະສາດ ຂະແໜງວິທະຍາສາດທຳທມະຊາດ ວິທະຍາໄລຄູຫຼວງພະບາງ, ເບີໂທ +856 20 55712182, ອີເມວ: Duangmala khamta@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 11 ທັນວາ 2023*
*ການປັບປຸງ: 14 ມີນາ 2024*
*ການຕອບຮັບ: 26 ມີນາ 2024*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອ 1) ປຽບທຽບຜົນການຮຽນຂອງນັກສຶກສາສາຍຄູເຄມີປີທີ 2 ທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ກັບ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນລະດົມສະໝອງ. 2) ປຽບທຽບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູເຄມີປີທີ 2 ຕໍ່ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ກັບ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບດ້ວຍວິທີສອນລະດົມສະໝອງ. ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ນັກສຶກສາສາຍຄູເຄມີປີທີ 2 ລະບົບ 12 + 4 ພາກຮຽນທີ 3 ສົກຮຽນ 2019-2020 ວິທະຍາໄລຄູຫຼວງພະບາງ ຈຳນວນ 2 ຫ້ອງ, ຫ້ອງລະ 24 ຄົນ ລວມກຸ່ມເປົ້າໝານທັງໝົດມີ 48 ຄົນ ດ້ວຍການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ ແຜນການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ດ້ວຍວິທີລະດົມສະໝອງ ຈຳນວນ 10 ແຜນ, ແຜນການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບດ້ວຍວິທີລະດົມສະໝອງ ຈຳນວນ 10 ແຜນ, ແບບທົດສອບວັດຜົນສຳເລັດທາງການຮຽນຂອງນັກສຶກສາຊະນິດເລືອກຕອບ 4 ຕົວເລືອກຈຳນວນ 50 ຂໍ້, ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ແຜນການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ແລະ ທິດສະດີຄຽງຄູ່ກັບຮູບພາບ ຊະນິດ Rating Scale 5 ລະດັບຈຳນວນ 26 ຂໍ້. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບສົມມຸດຕິຖານດ້ວຍ t-test (Independent Samples).

ຜົນການສຶກສາການຈັດການຮຽນຮູ້ ທິດສະດີຄຽງຄູ່ກັບວັດຖຸຈິງ ກັບ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນລະດົມສະໝອງພົບວ່າ:

ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງສົ່ງຜົນໃຫ້ນັກສຶກສາມີຜົນສຳເລັດທາງການຮຽນ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ສູງກ່ວານັກສຶກສາທີ່ຮຽນດ້ວຍການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ. ແຕ່ນັກສຶກສາທັງສອງກຸ່ມມີຄວາມເພິ່ງພໍໃຈຕໍ່ແຜນການຈັດການຮຽນຮູ້ທັງສອງແບບບໍ່ແຕກຕ່າງກັນ. ດັ່ງນັ້ນ, ຈິ່ງຄວນສົ່ງເສີມການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ດ້ວຍວິທີສອນລະດົມສະໝອງ ໄປໃຊ້ໃນການພັດທະນາທັກສະການຮຽນຮູ້ ຂອງນັກສຶກສາ ໃນວິຊາ ກາຍະວິພາກສັດບໍ່ມີກະດູກສັນຫຼັງຕໍ່ໄປ.

**ຄຳສັບສຳຄັນ:** *ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ, ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ, ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນ*

# Organizing theoretical learning along with real objects and arranging theoretical learning along with pictures of invertebrate anatomy using brainstorming method for 2nd year chemistry students, 12 + 4 system, 3rd semester 2019-2020 at Luang Prabang Teacher Training College

**Duangmala Khamta***

*Biology Unit, Department of Natural Sciences, Luang Prabang Teacher Training College, Lao PDR*

***Correspondent:** Duangmala Khamta, Department of Biology, Department of Natural Sciences, Luang Prabang Teacher Training College, Tel: +856 20 55712182, Email: Duangmala khamta@gmail.com*

***Article Info:***
*Submitted: Dec 11, 2023*
*Revised: Mar 14, 2024*
*Accepted: Mar 26, 2024*

## Abstract

The purpose of this research is (1) to compare the learning results of second year chemistry students who organize theoretical learning along with real objects and organize theoretical learning along with pictures through brainstorming teaching method. (2) To compare the satisfaction of the 2nd year chemistry students to the arrangement of theoretical learning along with real objects and the arrangement of theoretical learning along with pictures with brainstorming teaching method. The target group used in this research is the 2nd year students of the 12 + 4 systems, the 3rd semester of the 2019-2020 school year at Luang Prabang Teachers College. There are 2 classes, 24 students in each room. The total target group is 48 people with specific selection. The tools used in this research are 10 plans for learning theory along with real objects with brainstorming methods, 10 plans for learning theories with pictures using brainstorming methods, 50 items for students' academic achievement test with 4 choices, 50 items, questionnaire on student satisfaction with plans for learning theory with pictures and theory with pictures Rating Scale 5 level with 26 items. The statistics used to analyze the data are mean values, standard deviation values and hypothesis testing with t-test (Independent Samples).

The results of the study on organizing theoretical learning along with real objects and organizing theoretical learning along with pictures with the brainstorming method found that: organizing theoretical learning along with objects resulted in students having higher academic success in invertebrate anatomy than students who studied with organizing theoretical learning along with pictures in invertebrate anatomy. But both groups of students are satisfied with the two learning plans. Therefore, it should be promoted to organize the learning of theory along with real objects and theory along with pictures with brainstorming methods to be used in the development of students' learning skills in the next Invertebrate Anatomy course.

**Key worlds:** *Organizing theoretical learning along with real objects, arranging theoretical learning along with pictures, students are satisfied with the teaching.*

Khamta. (2024). Souphanouvong University Journal of Multidisciplinary Research and Development. ISSN 2521-0653.
Volume 10. Issue 1. Jan - Mar. 2024. Page 381 – 388

## 1. ພາກສະເໜີ

ວິທະຍາໄລຄູ ຫຼວງພະບາງ ມີບົດບາດສຳຄັນໃນການກໍ່ສ້າງຄູເປັນຕົ້ນແມ່ນຄູປະຖົມລະບົບ 9+3 ຄູຊັ້ນກາງ, ລະບົບ 12+2 ຄູຊັ້ນສູງ, ລະບົບ 12+4 ຄູປະລິນຍາຕີ, ຄູອະນຸບານ ລະບົບ 12+4, ຄູມັດທະຍົມຕົ້ນ ລະບົບ 12+4, ຄູມັດທະຍົມແຕ່ ມໍ$_1$-ມໍ$_7$ ລະບົບ 12+4. ນອກນັ້ນ, ວິທະຍາໄລຄູຫຼວງພະບາງ ຍັງກຽມຈະສ້າງຄວາມເປັນເລີດໃນສາຍຟີຊິກ ແລະ ສາຍຊີວະສາດ ໃນລະບົບ 12+4 ແຕ່ ມ$_1$-ມ$_7$ ເພື່ອຕອບສະໜອງຄູໃຫ້ແກ່ໂຮງຮຽນສາມັນແຫ່ງຕ່າງໆທັງ 3 ແຂວງພາກເໜືອໃຫ້ພຽງພໍ ແລະ ຖືກກັບຄວາມຕ້ອງການຄູ. ນອກຈາກນັ້ນ, ຍັງມີພາລະບົບບາດໃນການພັດທະນາ, ຍົກລະດັບຄວາມຮູ້ຄວາມສາມາດໃຫ້ຄູສອນໂຮງຮຽນສາມັນໃນໄລຍະພັກສິ້ນປີຮຽນ ຈາກຄູຊັ້ນກາງເປັນຄູຊັ້ນສູງ, ຍົກສູງຄຸນນະພາບ, ບົດບາດຂອງການກໍ່ສ້າງຄູ ແລະ ສ້າງໂອກາດໃຫ້ຄູພັດທະນາຕົນເອງທາງດ້ານຄວາມຮູ້ພື້ນຖານ ແລະ ຄວາມຮູ້ດ້ານວິຊາສະເພາະໃຫ້ກາຍເປັນຄູມືອາຊີບທີ່ສາມາດພັດທະນາຕົນຢ່າງຮອບດ້ານ (Ministry of Education and Sports: 2001). ນອກນັ້ນ, ວິທະຍາໄລຄູຫຼວງພະບາງກໍ່ຍັງມີແຜນພັດທະນາການຈັດການຮຽນ-ການສອນ ຄູສາຍຟີຊິກສາດ ແລະ ສາຍຊີວະສາດ ໃຫ້ຮັບປະກັນທາງດ້ານວິຊາການ ໃຫ້ເປັນທີ່ຍອມຮັບຂອງສັງຄົມ ສາມາດບໍລິການໄດ້ທັງພາຍໃນ ແລະ ພາຍນອກເປັນຢ່າງດີ ເພື່ອກ້າວສູ່ຄວາມເປັນເລີດໃນຕໍ່ໜ້າ (Academic Development Plan of Lpb TTC year, 2020-2024) ໃນນັ້ນການຈັດການຮຽນການສອນ ຕະຫຼອດໄລຍະຜ່ານມາ ວິທະຍາໄລຄູຫຼວງພະບາງ ບໍ່ມີຫ້ອງທົດລອງ ແລະ ບໍ່ມີອຸປະກອນການທົດລອງ ສະນັ້ນ ຄູວິທະຍາສາດຈິ່ງຈັດການຮຽນ-ການສອນແຕ່ທິດສະດີ ແລະ ເອົາຮູບພາບມາໃຫ້ນັກຮຽນສັງເກດ ແລ້ວກໍຈົດບົດຮຽນຕາມເອກະສານ ພໍມາຮອດສົກຮຽນ 2015-2016 ລັດຖະບານລາວກໍຄືກະຊວງສຶກສາທິການໄດ້ສະໜອງຫ້ອງທົດລອງ ແລະ ອຸປະກອນການທົດລອງຕາມລາຍວິຊາຕ່າງໆໃຫ້ ວິທະຍາໄລຄູຫຼວງພະບາງ ສະນັ້ນ ຂ້າພະເຈົ້າຈິ່ງຫັນມາຈັດການຮຽນ-ການສອນໂດຍໃຫ້ນັກສຶກສາໄດ້ຮຽນທິດສະດີແລ້ວເຮັດການທົດລອງ ແລະ ເອົາວັດຖຸຈິງມາສຶກສາຢູ່ຫ້ອງທົດລອງ ຮອດສົກຮຽນ 2019-2020 ຂ້າພະເຈົ້າກໍໄດ້ເຮັດການວິໄຈໂດຍການປຽບທຽບການຈັດການຮຽນ-ການສອນ ແບບທິດສະດີຄຽງຄູ່ກັບວັດຖຸຈິງ ແລະ ການຈັດການຮຽນຮູ້ທິດສະດີ ຄຽງຄູ່ກັບຮູບພາບ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ໂດຍໃຊ້ວິທີສອນລະດົມສະໝອງ.

ວິຊາສັດບໍ່ມີກະດູກສັນຫຼັງ ເປັນວິຊາໜຶ່ງທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດຂອງຄົນເຮົາ ເພາະວິຊານີ້ໄດ້ຮຽນຮູ້ກ່ຽວກັບລັກສະນະຕ່າງໆຄື: ການຈັດລະບົບຂອງຮ່າງກາຍ, ການຕອບສະໜອງຕໍ່ສິ່ງກະຕຸ້ນ, ປະຕິກິລິຍາເຄມີໃນຮ່າງກາຍ, ການຈະເລີນເຕີບໂຕ, ການສືບພັນ, ການປັບຕົວ ແລະ ຄວາມສຳພັນກັບສິ່ງທີ່ມີຊີວິດ ແລະ ສິ່ງແວດລ້ອມທີ່ໃຫ້ຜົນປະໂຫຍດ ແລະ ໃຫ້ໂທດໃນການດຳລົງຊີວິດປະຈຳວັນ. ອີກອັນໜຶ່ງຍັງເປັນພື້ນຖານຂອງເຕັກໂນໂລຊີຊີວະພາບ ຊຶ່ງເປັນປະໂຫຍດໃນການປັບປຸງຜົນຜະລິດທາງການກະເສດ, ທາງສາທາລະນະສຸກ ແລະ ສິ່ງແວດລ້ອມ, ເຊິ່ງຈະເຮັດໃຫ້ຄຸນນະພາບຊີວິດຂອງມະນຸດດີຂຶ້ນ. ເປົ້າໝາຍຂອງການຈັດການຮຽນ-ການສອນ ວິຊາຊີວະວິທະຍາໄດ້ເລັ່ງໃສ່ການໃຊ້ຂະບວນການສັງເກດ, ການສຳຫຼວດກວດສອບ, ການທົດລອງ ແລ້ວນຳຜົນທີ່ໄດ້ມາຈັດລະບົບເປັນຫຼັກການ, ແນວຄິດທິດສະດີ. ໂດຍເລັ່ງໃສ່ພັດທະນາເຮັດໃຫ້ຜູ້ຮຽນຄົ້ນພົບຄວາມຮູ້ດ້ວຍຕົນເອງຫຼາຍທີ່ສຸດ, ເພື່ອໃຫ້ໄດ້ທັງຂະບວນການ ແລະ ຄວາມຮູ້ ແລະ ກະຕືລືລົ້ນທີ່ຈະຮຽນຮູ້, ມີຄວາມສົງໄສ, ເກີດຄຳຖາມສິ່ງຕ່າງໆທີ່ກ່ຽວກັບສິ່ງມີຊີວິດ ແລະ ສິ່ງແວດລ້ອມອ້ອມຕົວ, ສິ່ງເຫຼົ່ານີ້ເປັນເລື່ອງທີ່ຄູທຸກຄົນຈະຕ້ອງໄດ້ໃຫ້ຄວາມສຳຄັນໃນການພັດທະນາການຮຽນ-ການສອນ ແລະ ທັດສະນະຄະຕິທາງຊີວະວິທະຍາແກ່ນັກຮຽນຢ່າງຈິງຈັງ ແລະ ເປັນໄປຕາມຈຸດປະສົງຂອງຫຼັກສູດ. ການຈັດການຮຽນ-ການສອນໃນປັດຈຸບັນຕ້ອງຖືເປັນສຳຄັນໃນການກໍ່ສ້າງນັກຮຽນໃຫ້ມີລັກສະນະເປັນເຈົ້າການໃນການຮໍ່າຮຽນ ແລະ ມີຄວາມຊິນເຄີຍໃນການຮຽນດ້ວຍຕົນເອງ.

ການຈັດການຮຽນ-ການສອນ ເປັນປັດໄຈສຳຄັນສ່ວນໜຶ່ງຂອງການສຶກສາເຊິ່ງເປັນເຄື່ອງມືໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ແລະ ເປັນບຸກຄະລາກອນຮັບໃຊ້ສັງຄົມ ໃຫ້ທຍັບເຂົ້າຫາສາກົນ ດັ່ງກະຊວງສຶກສາທິການ ແລະ ກິລາໄດ້ຈັດຕັ້ງປະຕິບັດແຜນຍຸດ

ທະສາດການປະຕິຮູບການສຶກສາແຫ່ງຊາດ 2006-2015, ໄລຍະທີ I (2006-2010) ໄດ້ສຸມໃສ່ປະຕິຮູບລະບົບສາຍສາມັນສຶກສາ ແລະ ໄລຍະທີ II (2011-2015) ສືບຕໍ່ປະຕິບັດວຽກທີ່ບໍ່ທັນສຳເລັດສົມບູນໃນໄລຍະທີ I ແລະ ຈະສຸມໃສ່ປະຕິຮູບສາຍອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ສາຍສ້າງຄູ. ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເຫັນວ່າການສຶກສາແຫ່ງຊາດໄດ້ມີການຫັນປ່ຽນທີ່ດີຂຶ້ນນັບທັງດ້ານປະລິມານ ແລະ ຄຸນນະພາບ. ແຕ່ຍັງມີບາງບັນຫາທີ່ຍັງມີຂໍ້ຈຳກັດ, ບໍ່ທັນເປັນສິ່ງເອື້ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໃຫ້ມີຄວາມກົມກຽວກັນ, ເປັນຕົ້ນແມ່ນບັນຫາແນວຄິດບາງອັນທີ່ບໍ່ທັນເປັນເອກະພາບຕໍ່ລະບົບຄຸ້ມຄອງການສຶກສາ, ການຈັດການຮຽນ-ການສອນຫຼັກສູດລະດັບຕ່າງໆ ໂດຍສະເພາະແມ່ນສະຖາບັນອາຊີວະສຶກສາ, ສະຖາບັນການສຶກສາຊັ້ນສູງ ແລະ ສະຖາບັນສ້າງຄູ (Phankham Viphavan; 2013). ໃນການສ້າງຄູສາຍມັດທະຍົມຕົ້ນ ແລະ ມັດທະຍົມປາຍກໍເຊັ່ນດຽວກັນ, ຄູຕ້ອງໄດ້ເລັ່ງໃສ່ການຈັດການຮຽນ-ການສອນໃຫ້ມີຄຸນນະພາບ ແລະ ເພື່ອຈະນຳໄປໃຊ້ສອນຢູ່ໃນທ້ອງຖິ່ນຂອງຕົນ. ອີງຕາມມະຕິເລກທີ 03 ຂອງກົມການເມືອງ ແລະ ຄຳສັ່ງແນະນຳເລກທີ 16/ນຍ ໄດ້ເລັ່ງໃສ່ການຮຽນ-ການສອນນັບແຕ່ລະດັບຫ້ອງກຽມປະຖົມຈົນເຖິງຊັ້ນມັດທະຍົມສຶກສາ ແມ່ນສືບຕໍ່ປັບປຸງມາດຖານການປະກັນຄຸນນະພາບການສຶກສາ ແລະ ກິລາໃນທຸກລະດັບ (Ministry of Education and Sports: 2012). ສະນັ້ນ, ໃນການສອນນັກຮຽນມັດທະຍົມຕົ້ນ ຫຼື ມັດທະຍົມປາຍ, ໃນວິຊາວິທະຍາສາດທຳມະຊາດ ກໍແມ່ນຈັດຢູ່ໃນວິຊາຫຼັກໃນຫຼັກສູດຊັ້ນມັດທະຍົມ ເຊິ່ງກວມເອົາທັງວິຊາຊີວະສາດ, ເຄມີສາດ ແລະ ແລະ ຟີຊິກຊາດ. ຄູຜູ້ສອນຕ້ອງໄດ້ເອົາໃຈໃສ່ໃນການສອນຄວາມຮູ້ດ້ານວິທະຍາສາດແກ່ນັກຮຽນ ໃຫ້ມີຄວາມໜັກແໜ້ນມາແຕ່ໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມ.

ຈາກການຈັດການຮຽນຮູ້ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງໃນວິທະຍາໄລຄູຜ່ານມາ ຍັງບໍ່ທັນມີຮູບແບບການສອນທີ່ຫຼາກຫຼາຍ, ເຊິ່ງສ່ວນຫຼາຍແມ່ນໄດ້ນຳໃຊ້ວິທີສອນແບບບັນຍາຍ ແລະ ອະທິບາຍ. ສ່ວນວິທີສອນແບບອື່ນໆ ແມ່ນບໍ່ໄດ້ໃຊ້ຫຼາຍຈຶ່ງບໍ່ສາມາດເຮັດໃຫ້ຄູທີ່ຈົບອອກໄປສອນຢູ່ຕາມໂຮງຮຽນຕ່າງໆ ບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ. ສິ່ງທີ່ເດັ່ນທີ່ສຸດແມ່ນການສອນວິທະຍາສາດຂອງນັກຮຽນຄູຍັງບໍ່ທັນໄດ້ດີ, ສ່ວນຫຼາຍແມ່ນສອນແບບນັກຮຽນບໍ່ໄດ້ຄົ້ນຄິດ ແລະ ນັກສຶກສາບໍ່ໄດ້ປະຕິບັດຕົວຈິງ ສ່ວນຫຼາຍນັກຮຽນມີແຕ່ລໍຖ້າຈົດບົດຮຽນນຳຄູ ແລະ ຈົດຕາມປຶ້ມແບບຮຽນທີ່ຄູກຳນົດໃຫ້. ບັນຫາດັ່ງກ່າວແມ່ນໄດ້ມາຈາກການລົງຕິດຕາມນັກຮຽນຄູປີ IV 12+4 ສາຍສ້າງຄູມັດທະຍົມຕົ້ນ ລົງປະສົບການ 11/2014 ແລະ ລົງເຝິກຫັດວິຊາຊີບ 3/2015.

ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງໄດ້ເລືອກເອົາວິທີສອນແບບລະດົມສະໝອງ ເຂົ້າໃນການຈັດການຮຽນ-ການສອນ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ເພື່ອນຳມາປັບປຸງບັນຫາດັ່ງກ່າວໃຫ້ໄດ້ດີຂຶ້ນ ແລະ ໃຫ້ມີຄວາມເໝາະສົມ ເພາະວິທີສອນແບບລະດົມສະໝອງ ປະກອບມີ: 1) ຂັ້ນນຳເຂົ້າສູ່ບົດຮຽນ, 2) ຂັ້ນລະດົມສະໝອງ, 3) ຂັ້ນອະທິບາຍ, 4) ຂັ້ນຈັດລະດັບຄວາມຄິດ ແລະ 5) ຂັ້ນວາງແຜນເພື່ອນຳໄປສູ່ການປະຕິບັດ (Moumkham & Moumkham, 2551).

## 2. ອຸປະກອນ ແລະ ວິທີການ

ປຽບທຽບຜົນການຮຽນຫຼັງສອນ ແລະ ຄວາມເພິ່ງພໍໃຈ ຕໍ່ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ແລະ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ໂດຍໃຊ້ວິທີສອນລະດົມສະໝອງ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ລະບົບ 12+4 ພາກ 1 ສາຍເຄມີ ປີ 2 ສົກຮຽນ 2019-2020 ໂດຍດຳເນີນການສອນ, ທົດສອບຫຼັງສອນ, ສອບຖາມ, ວິເຄາະ, ໄຈ້ແຍກຕາມເກນ ແລະ ມີວິທີການດຳເນີນການຄົ້ນຄວ້າດັ່ງນີ້:

### 2.1 ເຄື່ອງມືໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນໃນການຄົ້ນຄວ້າໃນຄັ້ງນີ້ ມີຄື:

- ບົດສອນ 10 ບົດ
- ບົດທົດສອບຫຼັງສອນ
- ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນຂອງຄູ
- ຄອມພິວເຕີ
- ບິກ ແລະ ເຈັ້ຍ

### 2.2 ວິທີການກຳນົດຜູ້ໃຫ້ຂໍ້ມູນ

ຜູ້ທີ່ໃຫ້ຂໍ້ມູນໃນການຄົ້ນຄວ້າຄັ້ງນີ້ໄດ້ກຳນົດ ແລະ ຄັດເລືອກເອົານັກສຶກສາຄູເຄມີປີທີ 2 ຈຳນວນ 2 ຫ້ອງຄື:

- ຫ້ອງ $2_ກ$ ເຄມີສາດ ມີ 24 ຄົນ, ຍິງ 11 ຄົນ.
- ຫ້ອງ $2_ຂ$ ເຄມີສາດ ມີ 24 ຄົນ, ຍິງ 12 ຄົນ.

### 2.3 ວິທີການເກັບກຳຂໍ້ມູນ

ຜູ້ຄົ້ນຄວ້າດຳເນີນການເກັບຂໍ້ມູນໂດຍນຳແຜນການສອນ ດຳເນີນການສອນກັບນັກສຶກສາປີທີ 2 ລະບົບ 12 + 4 ສາຍຄູເຄມີ ທີ່ວິທະຍາໄລຄູຫຼວງພະບາງ ໂດຍຜູ້ຄົ້ນຄວ້າເປັນຜູ້ດຳເນີນການສອນດ້ວຍຕົນເອງ ແລະ ດຳເນີນການສອນໄວ້ດັ່ງນີ້ :

1. ດຳເນີນການສອນໂດຍສອນນັກສຶກສາຕາມແຜນການສອນທີ່ກະກຽມໄວ້ໃນເດືອນ ກັນຍາ ຫາ ເດືອນ ມັງກອນ ຂອງສົກຮຽນ 2019-2020.

2. ໃຫ້ນັກສຶກສາກຸ່ມຕົວຢ່າງທີ 1 ແລະ ກຸ່ມຕົວຢ່າງທີ 2 ກຸ່ມລະ 24 ຄົນເຮັດແບບທົດສອບວັດຜົນການຮຽນຈຳນວນ 50 ຂໍ້ ຫຼັງຈາກສອນໝົດ 10 ບົດສອນ

3. ໃຫ້ນັກສຶກສາກຸ່ມຕົວຢ່າງທີ 1 ແລະ ກຸ່ມຕົວຢ່າງທີ 2 ຕອບແບບສອບຖາມຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນຮູ້ແບບລະດົມສະໝອງ ຊະນິດມາດຕາສ່ວນປະມານຄ່າ (Rating Scale) ຈຳນວນ 26 ຂໍ້.

### 2.4 ວິທີການວິເຄາະ

ການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ເຮັດການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມສຳເລັດຮູບດັ່ງນີ້:

1. ນຳເອົາບົດທົດສອບມາກວດໃຫ້ຄະແນນຕາມເກນທີ່ກຳນົດໄວ້ແລ້ວນຳເອົາຜົນຄະແນນທີ່ໄດ້ຈາກແບບທົດສອບມາຄິດໄລ່ຕາມສູດທີ່ກຳນົດໄວ້ ໂດຍນຳໃຊ້ໂປຣແກຣມສຳເລັດຮູບ.

2. ນຳເອົາແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາມາຄິດໄລ່ຕາມສູດທີ່ກຳນົດໄວ້ ໂດຍນຳໃຊ້ໂປຣແກຣມສຳເລັດຮູບ.

## 3. ຜົນໄດ້ຮັບ

ການຈັດການຮຽນ-ການສອນ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ທີ່ນຳໃຊ້ເທັກນິການສອນແບບລະດົມສະໝອງ ໂດຍໃຊ້ວັດຖຸຈິງ ແລະ ຮູບພາບ ມາເປັນສື່ໃນກິດຈະກຳການສອນ ເຫັນວ່ານັກສຶກສາທັງສອງຫ້ອງມີຜົນການຮຽນຫຼັງສອນ ແລະ ມີຄວາມເພິ່ງພໍໃຈຕໍ່ການສອນຂອງຄູດັ່ງນີ້:

### 3.1 ຜົນການຮຽນຫຼັງສອນຂອງນັກສຶກສາທັງ 2 ຫ້ອງ

ຜ່ານການວິເຄາະ ຜົນການຮຽນຂອງນັກສຶກສາຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ດ້ວຍວິທີສອນແບບລະດົມສະໝອງມີຜົນການຮຽນ $\overline{X} = 42$; ມີ S.D = 3.67. ສ່ວນນັກສຶກສາຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນແບບລະດົມສະໝອງມີຜົນ $\overline{X} = 36.50$; ມີ S.D = 3.92 ຈາກຄະແນນເຕັມ 50. ການທົດສອບທາງສະຖິຕິ ມີ t Stat = 4.9265 ແລະ P(T<=t) two-tail = 0.00001 ເຊິ່ງມີຄ່າຕໍ່າກວ່າ ຄ່າລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ທີ່ຕັ້ງໄວ້ ສະແດງວ່ານັກສຶກສາສາຍຄູເຄມີປີທີ 2 ທີ່ໄດ້ຮັບການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ແລະ ຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນແບບລະດົມສະໝອງ ກ່ຽວກັບວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ມີຜົນການຮຽນແຕກຕ່າງກັນ.

### 3.2 ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນຂອງຄູທັງ 2 ຫ້ອງ

ຜົນການວິເຄາະ ຜົນຄວາມເພິ່ງພໍໃຈຂອງນັກສຶກສາຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ດ້ວຍວິທີສອນລະດົມສະໝອງ ມີຄະແນນຄວາມເພິ່ງພໍໃຈມີ $\overline{X} = 95.17$ ; ມີ S.D = 16.03. ສ່ວນນັກສຶກສາຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນລະດົມສະໝອງ ຄະແນນຄວາມເພິ່ງພໍໃຈມີ $\overline{X} = 97.08$; ມີ S.D = 19.28 ຈາກຄະແນນເຕັມ 120. ການທົດສອບທາງສະຖິຕິ ມີ t Stat = - 0.3744 ແລະ P(T<=t) two-tail = 0.7098 ເຊິ່ງມີຄ່າສູງກວ່າ ຄ່າລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ທີ່ຕັ້ງໄວ້ ສະແດງວ່ານັກສຶກສາສາຍຄູເຄມີປີທີ 2 ທີ່ໄດ້ຮັບການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ແລະ ຫ້ອງທີ່ຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ດ້ວຍວິທີສອນແບບລະດົມສະໝອງ ກ່ຽວກັບວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ມີຄວາມ

Khamta. (2024). Souphanouvong University Journal of Multidisciplinary Research and Development. ISSN 2521-0653.
Volume 10. Issue 1. Jan - Mar. 2024. Page 381 – 388

ເພິ່ງພໍໃຈຕໍ່ຈັດການຮຽນຮູ້ບໍ່ແຕກຕ່າງກັນ ແລະ ບໍ່ໄປຕາມ ສົມມຸດຖານທີ່ກຳນົດໄວ້.

## 4. ວິພາກຜົນ

ຜົນການຮຽນຂອງນັກສຶກສາຫ້ອງທີ່ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ໂດຍນຳໃຊ້ວິທີສອນແບບລະດົມສະໝອງ ຜົນການຮຽນຂອງນັກສຶກສາໄດ້ຮັບຜົນດີກວ່າ ຫ້ອງທີ່ໄດ້ຮັບການຈັດການຮຽນຮູ້ທິດສະດີຄຽງຄູ່ກັບຮູບພາບ ໂດຍໃຊ້ວິທີສອນລະດົມສະໝອງ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

ອາດເນື່ອງມາຈາກວ່າ ການຈັດການຮຽນຮູ້ທິດສະດີຄຽງຄູ່ກັບວັດຖຸຈິງ ໃນເວລາສອນຄູໄດ້ໃຫ້ນັກສຶກສາແຕ່ລະກຸ່ມໄດ້ສັງເກດເບິ່ງລັກສະນະພາຍນອກສັດຕົວຈິງ, ໄດ້ໃຫ້ນັກສຶກສາແຕ່ລະກຸ່ມຜ່າຕັດເບິ່ງອະໄວຍະວະພາຍໃນຂອງສັດຕົວຈິງດ້ວຍມືຂອງນັກສຶກສາ ແລະ ໄດ້ສັງເກດເບິ່ງສັດດ້ວຍຕາຂອງນັກສຶກສາເອງ ເຊິ່ງສອດຄ່ອງກັບທິດສະດີການຮຽນຮູ້ຂອງ (Khotrakun, 2553) ກ່າວໄວ້ວ່າ ມະນຸດມີການດູດຊຶມເອົາປະສົບການໃໝ່ເຂົ້າສູ່ໂຄງສ້າງຂອງສະຕິປັນຍາ ຫຼັງຈາກມີການປະຕິສຳພັນກັບສິ່ງແວດລ້ອມການປັບໂຄງສ້າງຂອງສະຕິປັນຍາທີ່ມີຢູ່ແລ້ວໃຫ້ເຂົ້າກັບສິ່ງແວດລ້ອມໃໝ່ທີ່ໄດ້ຮຽນຮູ້ເພີ່ມຂຶ້ນ. ສ່ວນຫ້ອງທີ່ຈັດການສອນທິດສະດີຄຽງຄູ່ກັບຮູບພາບ ຜົນການຮຽນຂອງນັກສຶກສາຕ່ຳກວ່າ ອາດຍ້ອນນັກສຶກສາບໍ່ໄດ້ສຳຜັດສັດຕົວຈິງ ເພາະວ່າເວລາສອນຄູຢາຍແຕ່ຮູບໃຫ້ນັກສຶກສາແຕ່ລະກຸ່ມສັງເກດລັກສະນະພາຍນອກ ແລະ ພາຍໃນຂອງສັດຕາມຮູບ ບໍ່ໄດ້ສຳຜັດກັບສັດຈິງ ສະນັ້ນຈິ່ງເຮັດໃຫ້ກຳເນື້ອໃນບົດຮຽນບໍ່ໄດ້ດີ ຈິ່ງເຮັດໃຫ້ຜົນຄະແນນຂອງນັກສຶກສາຫ້ອງທີ່ໃຊ້ຮູບພາບມາເປັນສື່ການສອນໄດ້ຄະແນນຕ່ຳກວ່າ ເຖິງຄະແນນຈະຕ່ຳກ່ວາແຕ່ກໍຢູ່ໃນເກນທີ່ດີ ຍ້ອນກິດຈະກຳການສອນຄູໄດ້ນຳໃຊ້ເທັກນິກການສອນແບບລະດົມສະໝອງເຊັ່ນດຽວກັນ ເຊິ່ງສອດຄ່ອງກັບຜົນຄົ້ນຄ້ວາຂອງ (Sengkam, 2550) ຜົນການຮຽນຂອງນັກຮຽນໃນຊັ້ນມັດທະຍົມສຶກສາປີທີ 3 ໂດຍໃຊ້ເທັກນິກການສອນລະດົມສະໝອງ ແມ່ນໄດ້ຮັບຜົນໃນລະດັບດີ. ພ້ອມນັ້ນການສອນທັງສອງຫ້ອງຄູໄດ້ໃຫ້ນັກສຶກສາບັນທຶກເອົາສິ່ງຕ່າງໆ ທີ່ເຫັນຈາກການສັງເກດຂຽນລົງໃນຮາງບັນທຶກແລ້ວສະຫຼຸບຕາມສິ່ງທີ່ເຫັນຕາມຄຳຖາມຂອງຄູ, ເວລາຄົ້ນຄວ້າກິດຈະກຳນັກສຶກສາແຕ່ລະກຸ່ມໄດ້ຊ່ວຍເຫຼືອກັນ, ຄູໄດ້ຕິດຕາມໃຫ້ຄຳປຶກສາຊ່ວຍເຫຼືອແຕ່ລະກຸ່ມ, ຄູໃຫ້ນັກສຶກສາຂຶ້ນລາຍງານແລ້ວນັກສຶກສາແຕ່ລະກຸ່ມແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນ ໂດຍບໍ່ຈຳກັດຄວາມຄິດ ເຊິ່ງເປັນໄປຕາມທິດສະດີລະດົມສະໝອງຂອງ (Geoffrey, 1981) ໄດ້ໃຫ້ຄວາມໝາຍໄວ້ວ່າ ການລະດົມສະໝອງຈະລວມຢູ່ໃນເທັກນິກຂອງຄວາມຄິດສ້າງສັນ ເຊິ່ງເປັນກິດຈະກຳທີ່ເຮັດໃຫ້ເກີດຄວາມຄິດ ການລະດົມສະໝອງ ຕ້ອງການຢຸດພັກການຕັດສິນໃຈຊົ່ວຄາວ ແລະ ຍອມຮັບຄວາມຄິດ ເຖິງຄວາມຄິດທີ່ບໍ່ເປັນປະໂຫຍດກໍຕາມ ແລະ ສອດຄ່ອງກັບທິດສະດີລະດົມສະໝອງຂອງ (Moumkham & Moumkham, 2551) ໄດ້ຂຽນຄວາມໝາຍວ່າ ການລະດົມສະໝອງເປັນຂະບວນການຮຽນຮູ້ທີ່ຜູ້ຮຽນທຸກຄົນໄດ້ສະແດງຄວາມຄິດເຫັນຢ່າງເສລີ ບໍ່ມີການວິພາກວິຈານຄວາມຄິດເຫັນ ແລະ ມີການບັນທຶກຄວາມຄິດເຫັນທັງໝົດຈັດເປັນ ໝວດໝູ່ ແລ້ວຕັດສິນຄວາມຖືກຕ້ອງນຳໄປໃຊ້. ນອກນັ້ນ ຄູຍັງໄດ້ໃຫ້ນັກສຶກສາແຕ່ລະກຸ່ມສະຫຼຸບເອົາເນື້ອໃນບົດຮຽນດ້ວຍຕົວຂອງນັກສຶກສາເອງ, ຄູໄດ້ສະຫຼຸບຜົນການລາຍງານຂອງແຕ່ລະກຸ່ມພ້ອມທັງໃຫ້ຄະແນນໄປພ້ອມ ແລະ ຄຳຖາມປະເມີນສອດຄ່ອງກັບເນື້ອໃນບົດຮຽນທີ່ສອນ ເຊິ່ງສອດຄ່ອງກັບທິດສະດີລະດົມສະໝອງຂອງ (Suwathai, 2534) ໄດ້ກ່າວໄວ້ວ່າ ການລະດົມສະໝອງເປັນວິທີໜຶ່ງໃນການແກ້ບັນຫາ ມີຈຸດມຸ້ງໝາຍເພື່ອສົ່ງເສີມໃຫ້ບຸກຄົນທີ່ມີຄວາມຄິດຫຼາຍທິດທາງ ຄິດໄດ້ໃນຊ່ວງເວລາທີ່ຈຳກັດ ເປັນກຸ່ມຄິດແລ້ວຈົດກ່າຍຄວາມຄິດຕ່າງໆ ທີ່ຄິດໄວ້ໂດຍບໍ່ຄຳນຶງການປະເມີນຄວາມຄິດແຕ່ເນັ້ນທີ່ປະລິມານຄວາມຄິດ ແລະ ໃນຂັ້ນສຸດທ້າຍກໍເລືອກເອົາຄວາມຄິດທີ່ດີທີ່ສຸດມາໃຊ້ໃນການແກ້ບັນຫາ ແລະ ຈັດລຳດັບທາງເລືອກໄວ້ອີກດ້ວຍ.

ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນຂອງຄູທັງສອງຫ້ອງບໍ່ມີຄວາມແຕກຕ່າງກັນນັ້ນອາດຍ້ອນຄູໄດ້ນຳໃຊ້ວິທີສອນລະດົມສະໝອງຄືກັນ, ທຸກຂັ້ນຕອນຂອງການສອນແມ່ນປະຕິບັດຄືກັນ ຕ່າງແຕ່ການໃຊ້ສື່ການສອນບໍ່ຄືກັນ ເຊິ່ງໃນເວລາສອນຄູໄດ້ແບ່ງນັກສຶກສາອອກເປັນກຸ່ມແຕ່ລະກຸ່ມຈຳນວນນັກສຶກສາເໝາະສົມ, ນັກສຶກສາ

ແຕ່ລະຄົນໃນກຸ່ມມີໜ້າທີ່ຮັບຜິດຊອບຢ່າງລະອຽດ ເຊິ່ງສອດຄ່ອງກັບທິດສະດີເພິ່ງພໍໃຈຂອງ ສຸຊາ (Chanthaem, 2541) ໄດ້ໃຫ້ຄວາມສຳຄັນຂອງຄວາມເພິ່ງພໍໃຈວ່າ ຄວາມເພິ່ງພໍໃຈກໍໃຫ້ເກີດຄວາມຮ່ວມໃຈໃນການປະຕິບັດວຽກງານ ເພື່ອບັນລຸຈຸດປະສົງຂອງວຽກງານກໍຄືໜ່ວຍງານທີ່ຮັບຜິດຊອບ. ນອກນັ້ນ, ກ່ອນຈະສອນຄູໄດ້ແຈ້ງຈຸດປະສົງຂອງການສອນໃຫ້ນັກສຶກສາຮູ້ທຸກບົດ, ຄູມີກາຕິກາໃນການປະຕິບັດກິດຈະກຳເໝາະສົມ, ຄຳຖາມແຕ່ລະກິດຈະກຳສອດຄ່ອງກັບເນື້ອໃນບົດຮຽນທີ່ສອນ, ເວລາສອນຄູເປັນກັນເອງກັບນັກສຶກສາ, ເວລາຄົ້ນຄວ້າກິດຈະກຳນັກສຶກສາແຕ່ລະກຸ່ມໄດ້ຊ່ວຍເຫຼືອກັນ, ຄູໄດ້ຕິດຕາມໃຫ້ຄຳປຶກສາຊ່ວຍເຫຼືອນັກສຶກສາແຕ່ລະກຸ່ມ ເຊິ່ງສອດຄ່ອງກັບທິດສະດີເພິ່ງພໍໃຈຂອງ (AithPrida, 2541) ຂຽນວ່າ ຄວາມຮູ້ສຶກພໍໃຈຈະເກີດຂຶ້ນເມື່ອຄວາມຕ້ອງການຂອງບຸກຄົນໄດ້ຮັບການຕອບສະໜອງ ຫຼື ບັນລຸຈຸດປະສົງໃນລະດັບໃດໜຶ່ງ. ຈາກນັ້ນເມື່ອນັກສຶກສາຄົ້ນຄ້ວາກິດຈະກຳກຸ່ມສຳເລັດຕາມເວລາທີ່ກຳນົດແລ້ວ ຄູໄດ້ເລືອກເອົານັກສຶກສາຕາງໜ້າກຸ່ມຂຶ້ນລາຍງານຢູ່ກະດານ, ຄູໃຫ້ນັກສຶກສາແຕ່ລະກຸ່ມໄດ້ແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນ ເຊິ່ງສອດຄ່ອງກັບດິດສະດີເພິ່ງພໍໃຈຂອງ (Pididilok, 2527) ສະເໜີວ່າ ຄວາມເພິ່ງພໍໃຈຈະເກີດຂຶ້ນໄດ້ກໍຕໍ່ເມື່ອມີຄວາມຕ້ອງການຂອງມະນຸດໄດ້ຮັບການຕອບສະໜອງ, ເຊິ່ງມະນຸດບໍ່ວ່າຈະຢູ່ບ່ອນໃດກໍ່ຕາມຍ່ອມມີຄວາມຕ້ອງການຂັ້ນພື້ນຖານບໍ່ຕ່າງກັນ ແລະຍັງສອດຄ່ອງກັບອົງປະກອບທີ່ເຮັດໃຫ້ເກີດຄວາມເພິ່ງພໍໃຈຂອງ (Bernard, 1968). ນອກນັ້ນ, ເວລານັກສຶກສາແລກປ່ຽນບົດຮຽນກັນຄູຍັງມີຄຳຖາມເຈາະຈົ້ມແຕ່ລະກຸ່ມເມື່ອລາຍງານສິ້ນສຸດ ແລະ ຄູໄດ້ສະຫຼຸບຜົນການລາຍງານຂອງແຕ່ລະກຸ່ມພ້ອມທັງໃຫ້ຄະແນນໄປພ້ອມ ເຊິ່ງສອດຄ່ອງກັບທິດສະດີຄວາມເພິ່ງພໍໃຈຂອງ (Mousiphanh, 2544) ຂຽນວ່າ ຄວາມເພິ່ງພໍໃຈຈະເກີດແກ່ຜູ້ຮຽນຄື ການຊົມເຊີຍ, ການຕຳນິ, ການທົດສອບຫຼາຍຄັ້ງ, ການຄົ້ນຫາຄວາມຮູ້ດ້ວຍຕົນເອງ, ໃຊ້ວິທີການຮຽນ-ການສອນທີ່ແປກໃໝ່ເພື່ອສ້າງຄວາມສົນໃຈ, ຕັ້ງລາງວັນສຳລັບວຽກທີ່ມອບໝາຍເພື່ອເປັນການເສີມແຮງໃຫ້ນັກສຶກສາເກີດຄວາມພະຍາຍາມໃຫ້ວຽກທີ່ໄດ້ຮັບມອບໝາຍປະສົບຜົນສຳເລັດດ້ວຍດີ, ຍົກຕົວຢ່າງຈາກສິ່ງທີ່ຍັງບໍ່ທັນເຄີຍພົບ ແລະ ເຊື່ອມໂຍງບົດຮຽນໃໝ່ກັບສິ່ງທີ່ຮຽນຮູ້ມາກ່ອນ.

## 5. ສະຫຼຸບ

ຜົນການຈັດການຮຽນຮູ້ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ດ້ວຍເທັກນິກການສອນລະດົມສະໝອງ ທີ່ເອົາວັດຖຸຈິງມາເປັນສື່ການສອນ ເຮັດໃຫ້ຜູ້ຮຽນມີຜົນສຳເລັດທາງການຮຽນສູງກວ່າ ຫ້ອງທີ່ຈັດການຮຽນດ້ວຍເທັກນິກການສອນລະດົມສະໝອງ ທີ່ເອົາຮູບພາບມາເປັນສື່ການສອນ ມີຄວາມແຕກຕ່າງກັນ ຕາມສົມມຸດຕິຖານທີ່ຕັ້ງໄວ້.

ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນຂອງຄູ ວິຊາກາຍະວິພາກສັດບໍ່ມີກະດູກສັນຫຼັງ ທີ່ໃຊ້ວັດຖຸຈິງມາເປັນສື່ການສອນ ແລະ ໃຊ້ຮູບພາບມາເປັນສື່ການສອນ ໂດຍຈັດການຮຽນຮູ້ເທັກນິກລະດົມສະໝອງ ເຮັດໃຫ້ຜູ້ຮຽນມີຄວາມເພິ່ງພໍໃຈບໍ່ແຕກຕ່າງກັນ ບໍໄປຕາມສົມມຸດຕິຖານທີ່ຕັ້ງໄວ້.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດດ້ານການຈັດການຮຽນ-ການສອນຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ຢູ່ໃນບົດຄວາມວິຊາການບົດນີ້ບໍ່ມີຂໍ້ຂັດແຍ່ງກັບພາກສ່ວນໃດ, ກໍລະນີມີການລະເມີດໃນຮູບການໃດກໍ່ຕາມ ຂ້າພະເຈົ້າຍິນດີທີ່ຈະຮັບຜິດຊອບຜູ້ດຽວ.

## 7. ເອກະສານອ້າງອີງ

Aithprida, P. (2541). *Educational Psychology*. Faculty of Education, Srinakarinvirode Mahasarakham University.

Bernard, C. (1968). *The functions of the Excecutive, Massachusett: Harward University Press*.

Chanthaem, S. (2541). *Psychology in everyday life, Bangkok: Thai Watanabe*.

Dilak, K.P. (2529). *Theory of organizational management, Bangkok: The Printing Press*.

Geoffrey, R.J. (1981). *Creative thinking and brainstorming. Published by Gower Publishing Company Limited, England*.

Khamsi. (2544). *Satisfaction and needs of career education service center of out-of- school education service, Mahasarhat University*.

Khotrakun, S. (2553). *Educational Psychology, 9th Edition, Chulalongkorn University*.

Luang Prabang Teacher Training College. (2022). *Academic Development Plan of Lpb TTC Year*. 2020-2023, Luang Prabang Teacher Training College.

Ministry of Education and Sports. (2012). *Annual action plan 2012-2013, Vientiane*.

Ministry of Education and Sports. (2001). *20-year education strategy plan 2001-2020, Vientiane*.

Moumkham, S., &Mumkham, O. (2551). *19 How to organize learning to develop knowledge and skills, Bangkok*.

Sengkam, A. (2550). *Statistical study of the results of mathematics learning, the story of the probability of high school students in the 3rd year using brainstorming teaching techniques*. Bangkok, University editors, Kintorvillon University.

Suwathai, C. (2534). *Curriculum and Teaching*. Kinthawiron University.

Viphavanh, P. (2013). *Instruction of the Minister of Education and Sports on National Education Reform Phase II, Vientiane*.